# ເຊີນຊ່ອຍພວກເຮົາ

ALC ເປັນອົງກອນບໍ່ຫວັງຜົນກຳໄລ ປະຕິບັດງານໂດຍບັນດາອາສາສະຫມັກ ແລະພະນັກງານທ້ອງຖິ່ນ. ມີຜູ່ສະຫນັບສະຫນູນທັງບຸກຄົນ, ນິຕິບຸກຄົນ ອົງກອນອື່ນໆ ທີ່ມີວິໄສທັດ ອຸດົມຄະຕິ ແລະຄວາມມຸ່ງມາດປາຖະຫນາອັນດຽວກັບເຮົາ.

## ຊ່ອຍແນວໃດ

ALC ຕ້ອງການຜູ່ອຸປະຖຳ ແລະເພື່ອນຮ່ວມງານ ບໍ່ວ່າຈະເປັນສະຖາບັນການສຶກສາ ຫຼື ອົງກອນທຸລະກິດ ທັງພາຍໃນແລະຕ່າງປະເທດ ດ້ວຍການຊ່ອຍເຫຼືອຂອງທ່ານ ພວກເຮົາຈະສາມາດຈັດບຸນນິທັດສະການປື້ມ, ການເຝິກອົບຮົມ, ສຳມະນາ, ບັນຍາຍ ແລະກິດຈະກຳສົ່ງເສີມການອ່ານຫຼາກຫຼາຍຮູບແບບ.

## ຊ່ອຍວຽກກໍໄດ້

ພວກເຮົາຕ້ອງການຜູ່ມີຄວາມສາມາດດ້ານການຂຽນ, ແຕ້ມ ເພື່ອຜະລິດປື້ມສຳລັບເດັກນ້ອຍ, ນັກກິດຈະກຳ, ນັກເລົ່າລະຄອນເຈ້ຍ, ນັກດົນຕີ, ນັກຟ້ອນ, ນັກການສຶກສາ...

## ເຊີນບໍລິຈາກ

ເມື່ອທ່ານບໍລິຈາກ ທ່ານໄດ້ມອບປື້ມອ່ານໃຫ້ກັບເດັກນ້ອຍລາວທົ່ວປະເທດ. ທ່ານຍັງສາມາດຊ່ອຍສ້າງຫ້ອງສະຫມຸດໃຫ້ກັບໂຮງຮຽນ ຫຼືຊ່ອຍພິມປື້ມຕື່ມອີກຈັກເລື່ອງ. ຖ້າທ່ານຈະບໍລິຈາກ ກະລຸນາຕິດຕໍ່ຫາພວກເຮົາທັນທີ.


ຮູບຖ່າຍໂດຍ: ຢາຊູຣຸ ໂອຊິຮາຣາ

ອອກແບບໂດຍ: ມາຣຽນ ເຣດ





**ພວກເຮົາພິມປື້ມມາແລ້ວ ກວ່າ 223 ຫົວເລື່ອງ ເປັນຈຳນວນກວ່າ 911,755 ຫົວ;**


## ເຊີນຕິດຕໍ່

**Action with Lao Children (ALC)** ເມືອງໄຊເຊດຖາ, ບ້ານສະພັງໝໍ້
ນະຄອນຫຼວງວຽງຈັນ ສ.ປ.ປ ລາວ ຕູ້ໄປສະນີ 1518
ໂທລະສັບ/ແຟັກສ໌: **+856 21 416064** **E-mail: alclao@laotel.com**
**Facebook: Action with Lao Children**

**Tokyo**
**6-29-12-303 Minamimagome, Otaku, Tokyo, Japan**
**Phone: +81 3 3755 1603**
**E-mail: deknoylao@yahoo.co.jp, http://deknoylao.org**


# ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ
# Action with Lao Children (ALC)

ສ້າງສະພາບແວດລ້ອມທີ່ດີ ເພື່ອການອ່ານ ແລະ ອະນາຄົດອັນສົດໃສ ແກ່ເດັກນ້ອຍ



# ກ່ຽວກັບພວກເຮົາ

ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ ຫຼື Action with Lao Children (ALC) ແມ່ນອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ສ້າງຕັ້ງຂຶ້ນ ເພື່ອສົ່ງເສີມການສຶກສາແກ່ເດັກນ້ອຍລາວ ເພື່ອໃຫ້ເດັກນ້ອຍລາວ ສາມາດເລືອກອະນາຄົດຂອງເຂົາເຈົ້າໄດ້

## ພາລະກິດຂອງພວກເຮົາ

ເມື່ອ ALC ເລີ່ມດຳເນີນກິດຈະກຳໃນປີ 1982 ຢູ່ວຽງຈັນ ມີພຽງຫໍສະໝຸດແຫ່ງຊາດ ກັບຮ້ານຂາຍປຶ້ມຂອງລັດບ່ອນດຽວ ເດັກນ້ອຍລາວ ມີໂອກາດໄດ້ສຳຜັດປຶ້ມອ່ານໜ້ອຍຫຼາຍ ແມ່ນແຕ່ໃນທຸກມື້ນີ້ ການອ່ານແລະຂຽນກໍຍັງບໍ່ແມ່ນເລື່ອງປະຈຳວັນຂອງເດັກນ້ອຍລາວ ໂດຍສະເພາະໃນຊົນນະບົດ.

ຕະຫຼອດໄລຍະເວລາກວ່າຊາວປີ ALC ໄດ້ຈັດພິມປຶ້ມອ່ານເປັນພາສາລາວ ເພື່ອເຮັດໃຫ້ສະພາບການອ່ານຂອງເດັກແລະໄວໜຸ່ມລາວມີທ່າກ້າວຂຶ້ນ ຄວາມປາຖະໜາຂອງພວກເຮົາ ແມ່ນການເປີດໂລກະທັດໃຫ້ແກ່ເດັກນ້ອຍ ເຮັດໃຫ້ເຂົາເຈົ້າກ້າສະແດງອອກ ສາມາດເລືອກເສັ້ນທາງເດີນອັນຖືກຕ້ອງ ດ້ວຍໂຕເອງ ເພື່ອເປັນຜູ້ສ້າງໂລກອັນສະຫງົບສຸກໃນອະນາຄົດ.



# ສິ່ງທີ່ພວກເຮົາເຮັດ

## ການພິມປຶ້ມ

ປຶ້ມທີ່ ALC ຈັດພິມ ມີທັງປຶ້ມປະກອບຮູບ, ນິທານພື້ນເມືອງ, ວັດຈະນານຸກົມປະກອບພາບ ແປອັນນະຄະດີເດັ່ນຂອງຕ່າງປະເທດ... ສ່ວນໃຫຍ່ແມ່ນສຳລັບເດັກນ້ອຍແລະທັງໝົດເປັນພາສາລາວ. ຮອດມື້ນີ້ ALC ໄດ້ຈັດພິມປຶ້ມແລ້ວ ກວ່າ 223 ຫົວເລື່ອງ ເປັນຈຳນວນ 911,755 ຫົວ.

## ຂະຫຍາຍໂອກາດການເຂົ້າເຖິງການອ່ານ

ALC ໄດ້ແຈກຢາຍຕູ້ປຶ້ມແລະຖົງປຶ້ມ ໃຫ້ແກ່ບັນດາໂຮງຮຽນປະຖົມແລະມັດທະຍົມ ກວ່າ 3000 ແຫ່ງ ກວມໄດ້ 17 ແຂວງ. ນີ້ແມ່ນການຮ່ວມມືລະຫວ່າງ ALC ຫໍສະໝຸດແຫ່ງຊາດ ແລະ ກະຊວງສຶກສາທິການ ພາຍໃຕ້ ໂຄງການສົ່ງເສີມການອ່ານແຫ່ງຊາດ.

ALC ສົ່ງເສີມການອ່ານໃນໂຮງຮຽນ ແລະຊຸມຊົນ ໂດຍຈັດຕັ້ງຫ້ອງສະໝຸດ ໃນຊື່ "ຮັກອ່ານ" ຕາມການສະເໜີຈາກໂຮງຮຽນ ຫຼື ຊຸມຊົນ (ຜ່ານຫ້ອງການສຶກສາເມືອງແລະພະແນກສຶກສາແຂວງ) ໂດຍ ALC ຈະປະສານງານຊອກຫາທຶນເພື່ອປັບແປງຫ້ອງ ປະກອບເຟີນີເຈີ, ປຶ້ມ, ເຝິກອົບຮົມ ແລະ ຕິດຕາມ ບັນດາຫ້ອງຮັກອ່ານດັ່ງກ່າວ. ປັດຈຸບັນ ມີຫ້ອງ "ຮັກອ່ານ" 317 ແຫ່ງ ໃນ 16 ແຂວງ.

## ກໍ່ສ້າງຊັບພະຍາກອນມະນຸດ

ພວກເຮົາເຮັດວຽກນີ້ ເພື່ອຮັບປະກັນວ່າ ການນຳໃຊ້ປຶ້ມໃນທຸກບ່ອນທີ່ໄດ້ຮັບປຶ້ມໄປແລ້ວ ເປັນໄປຢ່າງມີປະສິດທິພາບ. ດ້ວຍເຫດນີ້ ພວກເຮົາຈຶ່ງຈັດການເຝິກອົບຮົມວຽກງານສົ່ງເສີມການອ່ານ ໃຫ້ຄູຜູ້ຮັບຜິດຊອບຫ້ອງສະໝຸດ, ຄູນິເທດ, ພະນັກງານສຶກສາຂັ້ນເມືອງແລະແຂວງ ແລະ ຄູໃນສະຖາບັນສ້າງຄູ ທັງໄດ້ເຝິກອົບຮົມ ແລະ ກວດສອບ



ການຂຽນ, ການແຕ້ມຮູບປະກອບປຶ້ມ, ລະຄອນເຈ້ຍ (KAMISHIBAI) ແກ່ຜູ້ສົນໃຈ ເພື່ອສ້າງນັກຂຽນ-ນັກແຕ້ມຮຸ່ນໃໝ່ນຳ.

## ສ.ອ.ດ ແລະ ສ.ພ.ດ

ສູນວັດທະນະທຳເດັກ (ສ.ອ.ດ) ແລະ ສູນພັດທະນາການສຶກສາສຳລັບເດັກ (ສ.ພ.ດ) ເປັນສະຖານທີ່ເຊິ່ງເດັກຈະໄດ້ຮຽນຮູ້ດ້ານສິລະປະວັດທະນະທຳ ຜ່ານກິດຈະກຳນັນທະນາການ ເຊັ່ນ ການອ່ານ, ຂຽນ, ຟ້ອນ, ດົນຕີ, ສິລະປະກຳ... ເຊິ່ງເປັນການຮຽນ ແບບທີ່ຕ່າງຈາກຫຼັກສູດການຮຽນທົ່ວໄປ. ປັດຈຸບັນ ALC ໄດ້ອຸປະຖຳງົບປະມານແກ່ ສ.ອ.ດ ແລະ ສ.ພ.ດ 8 ແຫ່ງ ໃນ 4 ແຂວງ ຄື ບໍລິຄຳໄຊ, ນະຄອນຫຼວງວຽງຈັນ, ໄຊຍະບູລີ ແລະ ແຂວງວຽງຈັນ.

## ບຸນນິທັດສະການປຶ້ມສຳລັບເດັກ

ຕັ້ງແຕ່ປີ 2006 ALC ໄດ້ຈັດບຸນນິທັດສະການປຶ້ມສຳລັບເດັກຂຶ້ນ ເພື່ອຂະຫຍາຍວຽກງານສົ່ງເສີມກາອ່ານ ສູ່ສັງຄົມທົ່ວໄປ ໃນລະດັບຊາດ. ກິດຈະກຳນີ້ ເຮັດໃຫ້ເຂົ້າເຖິງສິ່ງພິມ ຈາກທັງພາຍໃນ ແລະຕ່າງປະເທດຫຼາຍຂຶ້ນ, ສົ່ງເສີມຄວາມຄິດສ້າງສັນ ໃນການນຳໃຊ້ປຶ້ມ ເຊັ່ນ: ການເລົ່ານິທານ, ກາບກອນ, ເຊີ້ງ, ຮ້ອງເພງ, ແລະ ສິລະປະ ແບບຕ່າງໆ.